ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການຕ່າງປະເທດ
ກົມພິທີການທູດ

ເລກທີ 4158 /ຕປທ.ພທກ
ນະຄອນຫຼວງວຽງຈັນ, ວັນທີ 24 ມິຖຸນາ 2024

## ໜັງສືແຈ້ງເຊີນການປະມູນຈັດຊື້-ຈັດຈ້າງ

**ເຖິງ:** ບັນດາບໍລິສັດສະໜອງການພິມ.

**ເລື່ອງ:** ເຊີນເຂົ້າຮ່ວມຍື່ນຊອງປະມູນສະໜອງການພິມ ເພື່ອຮັບໃຊ້ກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ ຄັ້ງທີ 57 ແລະ ກອງປະຊຸມລັດຖະມົນຕີ ອື່ນໆທີ່ກ່ຽວຂ້ອງ ໃນວັນທີ 21-27 ກໍລະກົດ 2024.

- ອີງຕາມການເຫັນດີຂອງ ຄະນະນຳກະຊວງການຕ່າງປະເທດ ຄັ້ງວັນທີ 24 ເມສາ 2024.

ກົມພິທີການທູດ ຂໍຖືເປັນກຽດຮຽນເຊີນມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈ, ມີອຸປະກອນພຽງພໍ ແລະ ໄດ້ມາດຕະຖານ ແລະ ມີປະສົບປະການຮັບໃຊ້ກອງປະຊຸມລະດັບຊາດ ແລະ ສາກົນ ເຂົ້າຮ່ວມການປະມູນຈັດຊື້-ຈັດຈ້າງ ສະໜອງການພິມຕ່າງໆ ເພື່ອຮັບໃຊ້ກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ ຄັ້ງທີ 57 ແລະ ກອງປະຊຸມລັດຖະມົນຕີທີ່ກ່ຽວຂ້ອງ, ຊຶ່ງຈະຈັດຂຶ້ນ ໃນວັນທີ 21-27 ກໍລະກົດ 2024 ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ.

ການປະມູນຈະດຳເນີນຕາມຂັ້ນຕອນການສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019. ບໍລິສັດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນທີ່ ກົມພິທີການທູດ, ກະຊວງການຕ່າງປະເທດ ຕາມໂມງລັດຖະການ (ຊັ້ນ 1, ຕຶກ B, ໂທລະສັບ: 021- 454126) ຕັ້ງຢູ່: ຖະໜົນ 23 ສິງຫາ, ບ້ານ: ໂພນໄຊ, ເມືອງ: ໄຊເສດຖາ, ນະຄອນຫລວງວຽງຈັນ ເລີ່ມແຕ່ວັນທີ 25 ມິຖຸນາ 2024 ເປັນຕົ້ນໄປ.

ຊອງປະມູນຕ້ອງສົ່ງໃຫ້ກົມພິທີການທູດ, ກະຊວງການຕ່າງປະເທດ ຊ້າສຸດ ບໍ່ໃຫ້ກາຍ ເວລາ 08:30 ໂມງ ຂອງ ວັນທີ 11 ກໍລະກົດ 2024. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ຮັບພິຈາລະນາ ແລະ ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ທຸກໆ ຊອງປະມູນຈະໄດ້ເປີດ ໃນເວລາ 09:00 ໂມງ ຂອງວັນທີ 11 ກໍລະກົດ 2024 ທີ່ ຫ້ອງປະຊຸມກົມພິທີການ ຊັ້ນ 1, ຕຶກ B, ກະຊວງການຕ່າງປະເທດ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.

ທຸກຊອງປະມູນຕ້ອງໄດ້ປະກອບເງິນຄ້ຳປະກັນການປະມູນ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫລຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນ ຫຼື ໃບແຊັກທະນາຄານມາພ້ອມ.

**ຫົວໜ້າກົມ**

ກະຊວງການຕ່າງປະເທດ
ກົມພິທີການທູດ

ອຳໄພ ກົນດາວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ
ກົມພິທີການທູດ

ເລກທີ 4159 /ຕປທ.ພທກ
ນະຄອນຫຼວງວຽງຈັນ, ວັນທີ 24 ມິຖຸນາ 2024

# ເງື່ອນໄຂ ແລະ ຄຳແນະນຳສຳລັບຜູ້ເຂົ້າຮ່ວມປະມູນຈັດຊື້-ຈັດຈ້າງ

- ອີງຕາມກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍ ທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

ບໍລິສັດທີ່ເຂົ້າຮ່ວມການປະມູນສະໜອງການພິມຕ່າງໆ ເພື່ອຮັບໃຊ້ກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ ຄັ້ງທີ 57 ແລະ ກອງປະຊຸມລັດຖະມົນຕີທີ່ກ່ຽວຂ້ອງ, ຊຶ່ງຈະຈັດຂຶ້ນໃນວັນທີ 21-27 ກໍລະກົດ 2024 ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ ແມ່ນຕ້ອງມີເງື່ອນໄຂ ດັ່ງລຸ່ມນີ້:

<u>ເງື່ອນໄຂທົ່ວໄປ</u>

1. ຕ້ອງມີໃບທະບຽນວິສາຫະກິດ ແລະ ມີທຶນຈົດທະບຽນ 300 ລ້ານກີບ ຂຶ້ນໄປ (ກ່ອບປີ້ດ້ານຫຼັງມາພ້ອມ);
2. ຕ້ອງມີໃບອະນຸຍາດດຳເນີນທຸລະກິດຕາມລະບຽບກົດໝາຍຂອງ ສປປ ລາວ ປະຈຳປີ 2024;
3. ມີໃບທະບຽນອາກອນ ຫຼື ໃບຢັ້ງຢືນຊຳລະອາກອນທີ່ໃຊ້ໄດ້ເຖິງສົກປີ 2024 ຫຼື 2023;
4. ມູນຄ່າລວມສິນຄ້າທີ່ສະເໜີມາໃນຊອງປະມູນຕ້ອງເປັນເງິນກີບ ແລະ ລວມພາສີອາກອນຕ່າງໆ,
5. ຕ້ອງມີເງິນຄ້ຳປະກັນຊອງປະມູນ 2% ຂອງມູນຄ່າ (ແບງກາລັງຕີ);
6. ບໍລິສັດຕ້ອງມີອຸປະກອນທີ່ໄດ້ມາດຕະຖານ, ມີຈຳນວນຄົບຖ້ວນ ແລະ ປະສົບການຮັບໃຊ້ກອງປະຊຸມລະດັບຊາດ ແລະ ສາກົນ ມາກ່ອນ ຢ່າງໜ້ອຍ 02 ປີ;
7. ບໍລິສັດຕ້ອງສະໜອງການພິມຕ່າງໆ ໂດຍປະກອບມີການພິມບັດເຊີນ ແລະ ການພິມອື່ນໆ (ດັ່ງມີລາຍລະອຽດຕິດຄັດມາພ້ອມນີ້);
8. ຊອງປະມູນມີ 01 ຊອງ ຄື: ກາແດງ 01 ຊຸດ ແລະ ກ່ອບປີ້ 01 ຊຸດ;
9. ຕ້ອງເປັນບໍລິສັດທີ່ບໍ່ຖືກດຳເນີນຄະດີໃນ ສປປ ລາວ.

ດັ່ງນັ້ນ, ຈຶ່ງກຳນົດເງື່ອນໄຂ ແລະ ແນະນຳຜູ້ທີ່ຈະເຂົ້າຮ່ວມການປະມູນລາຄາຂ້າງເທິງນັ້ນ.

**ຫົວໜ້າກົມ**

ກະຊວງການຕ່າງປະເທດ
ກົມພິທີການທູດ

ອຳໄພ ກິນດາວົງ

<u>**ລາຍການພິມຕ່າງໆ**</u>

| | | | |
|---|---|---|---|
| 1 | ບັດເຊີນງານລ້ຽງລັດຖະມົນຕີ | 530 | ບັດ |
| 2 | ບັດເຊີນງານລ້ຽງເຈົ້າໜ້າທີ່ອາວຸໂສ | 300 | ບັດ |
| 3 | ບັດຕັ້ງໂຕະງານລ້ຽງ (ລມຕ ຕປທ + ເຈົ້າໜ້າທີ່ອາວຸໂສ) | 860 | ບັດ |
| 4 | ບັດຄູປອງອາຫານທ່ຽງ ຄະນະຜູ້ແທນທີ່ເຂົ້າຮ່ວມກອງປະຊຸມທັງໝົດ | 2100 | ບັດ |
| 5 | ບັດຄູປອງອາຫານຫວ່າງ ຄະນະຜູ້ແທນທີ່ເຂົ້າຮ່ວມກອງປະຊຸມທັງໝົດ | 6300 | ບັດ |
| 6 | ບັດຄູປອງອາຫານທ່ຽງ ພະນັກງານຮັບໃຊ້ | 10,500 | ບັດ |
| 7 | ປຶ້ມຄູ່ມື LO. DO. SO | 400 | ຫົວ |
| 9 | ປ້າຍຕິດທະບຽນລົດ (ໜ້າ-ຫຼັງ) | 830 | ອັນ |
| 10 | ສະຕິກເກີ້ຕິດລົດຄະນະຜູ້ແທນ ແລະ ອະນຸກຳມະການຕ່າງໆ | 2500 | ແຜ່ນ |
| 11 | ສະຕິກເກີ້ຕິດລົດຈັກຈາລະຈອນ ແລະ ອະນຸກຳມະການຕ່າງໆ | 700 | ແຜ່ນ |
| 12 | ເສົາທຸງຕິດລົດ ພ້ອມສິບໜັງ | 35 | ອັນ |
| 13 | ປ້າຍຈັດສັນບ່ອນຈອດລົດ ພ້ອມຂາຕັ້ງ | 20 | ແຜ່ນ |
| 14 | ປ້າຍບອກທາງຈຸດຕ່າງໆ ພ້ອມຂາຕັ້ງ | 20 | ແຜ່ນ |
| 15 | ປ້າຍຍົກບອກຕຳແໜ່ງລົດ (ສຳລັບ DO) | 68 | ແຜ່ນ |
| 16 | ປຶ້ມຄູ່ມືປ່ອຍຂະບວນລົດ | 300 | ຫົວ |
| 17 | ປ້າຍຊີຮັບຄະນະຜູ້ແທນຂອງ LO | 68 | ແຜ່ນ |
| 18 | ປຶ້ມລາຍການເຄື່ອນໄຫວ ສຳລັບການນຳ ແລະ ພົນລະຍາ | 35 | ຫົວ |
| 19 | ປຶ້ມຄູ່ມືຂໍ້ມູນກອງປະຊຸມ (ກອງປະຊຸມແຈ້ງໃຫ້ທູຕານຸທູດ) | 90 | ຫົວ |

Scanned with OKEN Scanner